**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------===000===------


ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6


ເລກທີ: 0136/21- ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 28 ມິຖຸນາ 2021

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

**ເລື່ອງ:** ການປ່ຽນແປງມູນຄ່າກຳນົດ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມ ໜັງສືແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 0010/ສຄຄຊ, ລົງວັນທີ 15 ມີນາ 2021
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ 4 ປະຈຳປີ 2020, ສະບັບເລກທີ 2010010/ມຫທຊ, ລົງວັນທີ 17 ຕຸລາ 2020
- ອີງຕາມ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020, ສະບັບເລກທີ 2012004/ມຫທຊ, ລົງວັນທີ 04 ທັນວາ 2020
- ອີງຕາມ ໜັງສືແຈ້ງຕອບຈາກກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 09/ກຄສງ, ລົງວັນທີ 08 ມັງກອນ 2021
- ອີງຕາມ ໜັງສືຮັບຮອງການປ່ຽນແປງເນື້ອໃນທະບຽນວິສາຫະກິດ ຄັ້ງທີ 2 ສະບັບເລກທີ 0930/ຈຫວ, ລົງວັນທີ 24 ມິຖຸນາ 2021

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມາຍັງທ່ານໃຫ້ຊາບວ່າບໍລິສັດ ໄດ້ສຳເລັດການຂຶ້ນທະບຽນປ່ຽນແປງກົດລະບຽບຂອງບໍລິສັດກ່ຽວກັບການ ປ່ຽນແປງມູນຄ່າກຳນົດຂອງຮຸ້ນຂ່ອງບໍລິສັດ ຈາກໜ່ວຍງານທີ່ກ່ຽວຂ້ອງ ເປັນທີ່ຮຽບຮ້ອຍແລ້ວ ໂດຍການແຕກຮຸ້ນ (Stock Split) ໂດຍປ່ຽນແປງມູນຄ່າກຳນົດ ຈາກ 1.000 ກີບ ມາເປັນ 100 ກີບຕໍ່ຮຸ້ນ ແລະ ເພີ່ມຈຳນວນຮຸ້ນຈາກ 40.000.000 ຮຸ້ນ ມາເປັນ 400.000.000 ຮຸ້ນ ໂດຍມີທຶນຈົດທະບຽນ 40.000.000.000 ກີບ ເທົ່າເດີມ ເຊິ່ງຫຼັງຈາກນີ້ຈະໄດ້ດຳເນີນການແຍກຮຸ້ນຕາມຂັ້ນຕອນທີ່ຕະຫຼາດຫຼັກຊັບລາວເປັນຜູ້ກຳນົດຕໍ່ໄປ

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ຜູ້ອຳນວຍການໃຫຍ່

(ທ່ານ ມາມີ ຕຣີລິດວິໄລ)